ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍລິຄຳໄຊ | ເລກທີ 191 /ຂບຊ

ບໍລິຄຳໄຊ, ວັນທີ 06 ເມສາ 2023

# ຂໍ້ຕົກລົງ
## ວ່າດ້ວຍນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນຄ່າເສຍຫາຍ ຈາກຜົນກະທົບຂອງໂຄງການກໍ່ສ້າງໂຮງງານ ຫຼອມເຫຼັກກ້າເຂດບ້ານ ຫາດໄຄ້ ແລະ ບ້ານທ່າບົກ ເມືອງທ່າພະບາດ ແຂວງບໍລິຄຳໄຊ.

- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ, ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍ ວ່າດ້ວຍການສ້າງນິຕິກຳ, ສະບັບປັບປຸງເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ດຳລັດ ນາຍົກລັດຖະມົນຕີ ແຫ່ງ ສປປລາວ ສະບັບເລກທີ 84/ລບ, ລົງວັນທີ 05 ເມສາ 2016 ວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນຈາກໂຄງການພັດທະນາ;
- ອີງຕາມ ມະຕິກອງປະຊຸມສະໄໝສາມັນ ເທື່ອທີ່ 4 ຂອງສະພາປະຊາຊົນ ແຂວງບໍລິຄຳໄຊ ຊຸດທີ II ສະບັບເລກທີ 31/ສພຂ.ບຊ, ລົງວັນທີ 09 ກຸມພາ 2023.

## ເຈົ້າແຂວງ ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ, ມາດຕະການ ແລະ ວິທີການຈັດຕັ້ງປະຕິບັດນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນຄ່າເສຍຫາຍຈາກຜົນກະທົບ ຂອງໂຄງການກໍ່ສ້າງໂຮງງານ ຫຼອມເຫຼັກກ້າ ເຂດບ້ານ ຫາດໄຄ້ ແລະ ບ້ານທ່າບົກ ເມືອງທ່າພະບາດ, ເພື່ອໃຫ້ການທົດແທນຄ່າເສຍຫາຍໄດ້ຮັບການຈັດຕັ້ງປະຕິບັດ ຢ່າງມີປະສິດທິຜົນ ແນໃສ່ປົກປ້ອງສິດຜົນປະໂຫຍດຂອງລັດ, ປະຊາຊົນຜູ້ໄດ້ຮັບຜົນກະທົບ ແລະ ເຈົ້າຂອງໂຄງການ, ຮັບປະກັນໃຫ້ມີຄວາມສອດຄ່ອງຖືກຕ້ອງ, ໂປ່ງໃສ, ຍຸຕິທຳ ຕາມນະໂຍບາຍຂອງລັດປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງແຂວງບໍລິຄຳໄຊ.

**ມາດຕາ 2 ນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນຄ່າເສຍຫາຍ**

ນະໂຍບາຍ ແມ່ນການກຳນົດເງື່ອນໄຂ ການຈ່າຍຄ່າທົດແທນ ຕໍ່ຊັບສິນຂອງຜູ້ໄດ້ຮັບກະທົບຈາກໂຄງການພັດທະນາ ເຊິ່ງປະກອບມີ: ທີ່ດິນ, ສິ່ງປຸກສ້າງ, ເຄື່ອງປູກ ແລະ ຕົ້ນໄມ້ທຳມະຊາດ ທີ່ເປັນເສດຖະກິດໂດຍໄດ້ຮັບການບົວລະບັດ ປົກປັກຮັກສາ ເພື່ອທົດແທນດ້ວຍເງິນ;

ລາຄາຫົວໜ່ວຍທົດແທນຄ່າເສຍຫາຍ ແມ່ນອັດຕາການຄິດໄລ່ ທີ່ນຳໃຊ້ເປັນພື້ນຖານໃນການທົດແທນຕໍ່ຜູ້ທີ່ຖືກຜົນກະທົບຈາກ ການກໍ່ສ້າງໂຮງງານຫຼອມເຫຼັກກ້າ.

**ມາດຕາ 3 ອະທິບາຍສັບ**

ຄໍາສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1. **ໂຄງການ:** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງໃດໜຶ່ງ ທີ່ໄດ້ຮັບອະນຸຍາດສຶກສາ, ສໍາຫຼວດ, ອອກແບບ, ກໍ່ສ້າງ ແລະ ດໍາເນີນໂຄງການພັດທະນາ;

2. **ໂຄງການພັດທະນາ**: ໝາຍເຖິງ ໂຄງການລົງທຶນ ແລະ ກິດຈະການຕ່າງໆທີ່ດໍາເນີນການພາຍໃນຂອບເຂດການພັດທະນາ;

3. **ຜູ້ໄດ້ຮັບຜົນກະທົບຈາກໂຄງການ** : ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບຜົນກະທົບຈາກໂຄງການ ທີ່ບໍ່ສາມາດນໍາໃຊ້ທີ່ດິນ ແລະ ຊັບສິນຢູ່ໃນບໍລິເວນໂຄງການ ແບບຖາວອນ ຫຼື ຊົ່ວຄາວ ຊຶ່ງໄດ້ຂຶ້ນທະບຽນໄວ້ໃນບັນຂຶ້ນທະບຽນສິດຂອງຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ;

4. **ສິດນໍາໃຊ້ທີ່ດິນ** : ໝາຍເຖິງ ສິດນໍາໃຊ້ທີ່ດິນຂອງພົນລະເມືອງລາວ ຊຶ່ງມີໃບຕາດິນຖືກຕ້ອງຕາມກົດໝາຍ;

5. **ສິດໃຊ້ທີ່ດິນຕາມປະເພນີ** : ໝາຍເຖິງ ການໄດ້ສິດນໍາໃຊ້ທີ່ດິນຈາກການຄອບຄອງ ແລະ ນໍາໃຊ້ທີ່ດິນຂອງພົນລະເມືອງ ລາວ ດ້ວຍການບຸກເບີກ, ປົກປັກຮັກສາ ແລະ ນໍາໃຊ້ທີ່ດິນ ຢ່າງເປັນປົກກະຕິເປັນເວລາຍາວນານຫຼາຍກວ່າຊາວປີ ກ່ອນປີ 1999 ຄືນຫຼັງ ໂດຍບໍ່ມີເອກະສານໃດຢັ້ງຢືນການໄດ້ມາທີ່ດິນນັ້ນ, ແຕ່ມີການຢັ້ງຢືນຈາກອົງການປົກຄອງບ້ານ ແລະ ເຈົ້າສິດນໍາໃຊ້ທີ່ດິນຂ້າງຄຽງ ກ່ຽວກັບການເຂົ້າມາຄອບຄອງ ແລະ ນໍາໃຊ້ນັ້ນຢ່າງຕໍ່ເນື່ອງ ໂດຍບໍ່ມີຂໍ້ຂັດແຍ່ງ ຫຼື ມີຂໍ້ຂັດແຍ່ງ ແຕ່ໄດ້ຮັບການແກ້ໄຂແລ້ວ.

6. **ການປະເມີນທົດແທນລາຄາເນື້ອທີ່ທໍາການຜະລິດ**: ໝາຍເຖິງ ການປະເມີນຈາກຂໍ້ມູນການ ທໍາການຜະລິດ ແລະ ການນໍາໃຊ້ເນື້ອທີ່ທໍາການຜະລິດຕົວຈິງ, ຄາດຄະເນລາຍໄດ້ລວມ ແມ່ນການກະຕວງ ລາຍໄດ້ລ່ວງໜ້າ ໂດຍອີງໃສ່ການເກັບກໍາຂໍ້ມູນຈາກຊະນິດພືດທີ່ປູກ ແລະ ລາຄາໃນທ້ອງຕະຫຼາດປະຈຸບັນ;

7. **ການທົດແທນເນື້ອທີ່ທໍາການຜະລິດ** : ໝາຍເຖິງ ການຈ່າຍເປັນເງິນທົດແທນ ໂດຍຜ່ານບັນຊີທະນາຄານຈາກການເສຍໂອກາດການນໍາໃຊ້ເນື້ອທີ່ດິນ ຫຼື ລາຍໄດ້ໃນເນື້ອທີ່ດິນ ທີ່ມີຜົນກະທົບດັ່ງກ່າວ ຕາມແຜນງົບປະມານຂອງລັດ;

8. **ດິນກະສິກໍາ** : ໝາຍເຖິງ ທີ່ດິນທີ່ກໍານົດໄວ້ເພື່ອນໍາໃຊ້ເຂົ້າໃນການປູກຝັງ, ລ້ຽງສັດ, ປະມົງ, ຊົນລະປະທານ ແລະ ການຄົ້ນຄວ້າທົດລອງດ້ານກະສິກໍາ ;

9. **ດິນນາເຟືອງ** : ໝາຍເຖິງ ພື້ນທີ່ທໍາການບຸກເບີກດ້ວຍແຮງງານຄົນ ຫລື ກົນຈັກມາກ່ອນ, ໄດ້ຕີເປັນຄັນ, ປ້ານເປັນຄູ, ເຮັດເປັນໄຮ່ນາເພື່ອເກັບກັກນໍ້າ ແລະ ນໍາໃຊ້ໃນການກະສິກໍາ ເຊັ່ນ: ການປູກເຂົ້ານາປີ ຫລື ພືດຊະນິດອື່ນ (ໃນລະດູຝົນ ແລະ ລະດູແລ້ງ ) ແບບຕໍ່ເນື່ອງ;

10. **ດິນນາເຮື້ອ :** ໝາຍເຖິງ ພື້ນທີ່ນາທີ່ມີການບຸກເບີກດ້ວຍແຮງງານຄົນ ຫລື ກົນຈັກ, ມີຄັນນາ, ເຮັດເປັນໄຮ່ນາ ແລະ ເຄີຍນໍາໃຊ້ໃນການປູກເຂົ້າ ແຕ່ບໍ່ໄດ້ທໍາການຜະລິດ ( ຢຸດຕິ ) ຕິດຕໍ່ກັນເປັນເວລາ 3 ປີຂຶ້ນໄປ;

11. **ດິນສວນທົ່ວໄປ :** ໝາຍເຖິງດິນທີ່ມີການບຸກເບີກ, ມີການຜະລິດແບບຕໍ່ເນື່ອງ ອາດຈະເປັນການປູກພືດໄລຍະສັ້ນ ຫລື ໄລຍະຍາວ ແລະ ມີການປົວລະບັດຮັກສາແບບຕໍ່ເນື່ອງທຸກປີ;

12. **ດິນສວນປູກໄມ້ອຸດສາຫະກໍາ :** ໝາຍເຖິງ ດິນທີ່ມີການບຸກເບີກ ແລະ ປູກຕົ້ນໄມ້ອຸດສາຫະກໍາປະເພດໃດໜຶ່ງ ຫລື ປູກຕົ້ນໄມ້ອຸດສາຫະກໍາແບບປະສົມປະສານ ໂດຍມີຈຸດປະສົງເພື່ອ ນໍາໃຊ້, ຂາຍ ຫລື ປ້ອນເຂົ້າໂຮງງານ;

13. **ຕົ້ນໄມ້ອຸດສາຫະກໍາ :** ໝາຍເຖິງ ຕົ້ນໄມ້ທີ່ໄດ້ປູກ ຫຼື ຕົ້ນໄມ້ທີ່ເກີດຂຶ້ນຕາມທໍາມະຊາດ ຢູ່ໃນບໍລິເວນດິນຂອງຕົນເອງທີ່ມີອາຍຸຍາວນານ, ມີຈຸດປະສົງປູກເພື່ອນໍາໃຊ້ ແລະ ເພື່ອເປັນສິນຄ້າ;

14. **ພືດຢືນຕົ້ນ:** ໝາຍເຖິງ ພືດໃຫ້ຜົນຜະລິດ ໃນໄລຍະເວລາ 6 ເດືອນ ຫາ 2 ປີຂຶ້ນໄປ;

**ມາດຕາ 4 ນະໂຍບາຍຂອງລັດ**

ລັດ ສົ່ງເສີມສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກໃຫ້ເຈົ້າຂອງໂຄງການ ໄດ້ດໍາເນີນໄປຕາມຈຸດປະສົງປະກອບສ່ວນເຂົ້າຕາມກົດໝາຍ ແລະ ລະບຽບການ

ລັດຊຸກຍູ້ ໃຫ້ເຈົ້າຂອງໂຄງການ ປະກອບສ່ວນທຶນ ເຂົ້າໃນການທົດແທນຄ່າເສຍຫາຍຕໍ່ຊັບສິນ ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ ກໍ່ສ້າງໂຮງງານ ຫຼອມເຫຼັກກ້າ.

ລັດເປີດກ້ວາງທຸກພາກສ່ວນສະແດງຄວາມຄິດເຫັນ ແລະ ສະເໜີບັນຫາຕ່າງໆ ເພື່ອໃຫ້ມີຄວາມເຂົ້າໃຈ ແລະ ເປັນເອກະພາບໃນການແກ້ໄຂບັນຫາແກ່ການດຳເນີນໂຄງການໃຫ້ມີຜົນສຳເລັດ.

ລັດປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງເຈົ້າຂອງໂຄງການ ແລະ ປະຊາຊົນທີ່ໄດ້ຮັບຜົນກະທົບ ໃຫ້ຖືກຕ້ອງສອດຄ່ອງຕາມກົດໝາຍ.

**ມາດຕາ 5 ຫຼັກການພື້ນຖານກ່ຽວກັບນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນຄ່າເສຍຫາຍ**

ນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນຄ່າເສຍຫາຍ ໃຫ້ປະຕິບັດຕາມຫຼັກການພື້ນຖານດັ່ງນີ້:

1. ຖືກຕ້ອງ ແລະ ສອດຄ່ອງ ຕາມແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ລະບຽບການ ແຜນພັດທະນາເສດຖະກິດ - ສັງຄົມ ຂອງແຂວງ;
2. ມີການປະສານສົມທົບ, ຄົ້ນຄວ້າ ປຶກສາຫາລື ລະຫວ່າງ ການຈັດຕັ້ງພາກລັດ, ພາກສ່ວນທີ່ກ່ຽວຂ້ອງ, ເຈົ້າຂອງໂຄງການ ແລະ ປະຊາຊົນຜູ້ໄດ້ຮັບຜົນກະທົບ;
3. ຮັບປະກັນຫຼັກການລວມສູນເປັນເອກະພາບກັນ ລະຫວ່າງ ອົງການຈັດຕັ້ງພາກລັດ ເຈົ້າຂອງໂຄງການ ແລະ ປະຊາຊົນຜູ້ໄດ້ຮັບຜົນກະທົບ ;
4. ຮັບປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ການປົກປ້ອງສິດຜົນປະໂຫຍດຂອງເຈົ້າຂອງໂຄງການ ແລະ ປະຊາຊົນຜູ້ໄດ້ຮັບຜົນກະທົບໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
5. ຮັບປະກັນຄວາມສະເໝີພາບ, ຖືກຕ້ອງ, ໂປ່ງໃສ, ເປີດເຜີຍ, ຍຸຕິທຳສາມາດກວດສອບໄດ້.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສະເພາະໃນການທົດແທນຄ່າເສຍຫາຍຕໍ່ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການສຳປະທານ ກໍ່ສ້າງໂຮງງານຫຼອມເຫຼັກກ້າ ໃນເນື້ອທີ່ 300 ເຮັກຕາ ; ຢູ່ບ້ານ ຫາດໄຄ້ ເນື້ອທີ່ 234,06 ເຮັກຕາ ບ້ານ ທ່າບົກ ເນື້ອທີ່ 65,94 ເຮັກຕາ ແລະ ການກໍ່ສ້າງເສັ້ນທາງເຂົ້າອອກໂຄງການ ຂະໜາດລວງກວ້າງ 25 ແມັດ ລວງຍາວ 3.000 ແມັດ ຢູ່ບ້ານ ທ່າບົກ ເມືອງ ທ່າພະບາດ ແຂວງ ບໍລິຄຳໄຊ.

## ໝວດທີ 2
## ນະໂຍບາຍ ແລະ ເງື່ອນໄຂການທົດແທນ

**ມາດຕາ 7 ນະໂຍບາຍສຳລັບຜູ້ໄດ້ຮັບຜົນກະທົບ**

ເຈົ້າຂອງໂຄງການຕ້ອງທົດແທນຄ່າເສຍຫາຍໃຫ້ຖືກຕ້ອງ ແລະ ສອດຄ່ອງກັບຫຼັກການ ຕາມແຕ່ລະກໍລະນີດັ່ງນີ້:

1. ໃນກໍລະນີຜູ້ໄດ້ຮັບຜົນກະທົບກ່ຽວກັບ ສິດນຳໃຊ້ທີ່ດິນ, ສິດຊົມໃຊ້ທີ່ດິນ ແລະ ສິດນຳໃຊ້ທີ່ດິນຕາມປະເພນີ ຢ່າງຖືກຕ້ອງຕາມກົດໝາຍ ທີ່ສູນເສຍທີ່ດິນທັງໝົດ ຫຼື ສ່ວນໃດໜຶ່ງເກີນ 80% ຂຶ້ນໄປ, ສ່ວນເນື້ອທີ່ດິນທີ່ຍັງເຫຼືອບໍ່ສາມາດນຳໃຊ້ໄດ້ອີກ ເຈົ້າຂອງໂຄງການຕ້ອງໄດ້ທົດແທນຄ່າເສຍຫາຍທັງໝົດ;
2. ໃນກໍລະນີຜູ້ໄດ້ຮັບຜົນກະທົບມີເອກະສານ ກ່ຽວກັບສິດໃຊ້ ຫຼື ສິດນຳໃຊ້ທີ່ດິນຢ່າງຖືກຕ້ອງຕາມກົດໝາຍ ຫາກໄດ້ສູນເສຍທີ່ດິນພຽງສ່ວນໜຶ່ງຕ່ຳກວ່າ 80% ລົງມາ ; ສ່ວນທີ່ດິນທີ່ຍັງເຫຼືອສາມາດນຳໃຊ້ໄດ້ ເຈົ້າຂອງໂຄງການຕ້ອງໄດ້ ທົດແທນຄ່າເສຍຫາຍໃນສ່ວນທີ່ໄດ້ສູນເສຍນັ້ນ ດ້ວຍມູນຄ່າ ຫົວໜ່ວຍລາຄາທີ່ຄິດໄລ່ໄວ້;
3. ໃນກໍລະນີຜູ້ໄດ້ຮັບຜົນກະທົບມີເອກະສານ ກ່ຽວກັບສິດໃຊ້ ຫຼື ສິດນຳໃຊ້ທີ່ດິນຢ່າງຖືກຕ້ອງຕາມກົດໝາຍ ຫາກໄດ້ສູນເສຍທີ່ດິນພຽງສ່ວນໜຶ່ງຕ່ຳກວ່າ 80% ລົງມາ ; ສ່ວນທີ່ດິນທີ່ຍັງເຫຼືອບໍ່ສາມາດນຳໃຊ້ໄດ້ ເຈົ້າຂອງໂຄງການຕ້ອງໄດ້ ທົດແທນຄ່າເສຍຫາຍ ດ້ວຍມູນຄ່າຫົວໜ່ວຍລາຄາທີ່ຄິດໄລ່ໄວ້;

ພາຍຫຼັງ ໄດ້ຮັບການທົດແທນຄ່າເສຍຫາຍສຳເລັດແລ້ວ ສ່ວນທີ່ນອນຢູ່ນອກໂຄງການ ທີ່ເປັນດິນຕອນດຽວກັນທີ່ຖືກຜົນກະທົບຈາກໂຄງການ ຈະຕ້ອງໄດ້ແບ່ງແຍກອອກຈາກຕອນດິນທີ່ຖືກໂຄງການ ເຈົ້າຂອງໂຄງການຕ້ອງໄດ້ເປັນເຈົ້າການປະສານງານນຳ ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອແບ່ງແຍກເອກະສານທີ່ດິນຕອນດັ່ງກ່າວ ພ້ອມທັງຮັບຜິດຊອບຄ່າສິ້ນເປືອງ, ຄ່າທຳນຽມຕ່າງໆ ທັງໝົດຈົນກວ່າໄດ້ຮັບເອກະສານທີ່ດິນ.

4. ໃນກໍລະນີຜູ້ໄດ້ຮັບຜົນກະທົບບໍ່ມີເອກະສານກ່ຽວກັບ ສິດນຳໃຊ້ທີ່ດິນ ແມ່ນປະຕິບັດການທົດແທນຄ່າເສຍຫາຍຕາມການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ.
5. ໃນກໍລະນີການຂໍນຳໃຊ້ທີ່ດິນ ຫຼື ສິ່ງປຸກສ້າງ ຊົ່ວຄາວທີ່ຢູ່ນອກໂຄງການ ເນື້ອທີ່ 300 ເຮັກຕາ ແລະ ແລວເສັ້ນທາງທີ່ກຳນົດໃໝ່, ຕ້ອງໄດ້ເຮັດບົດບັນທຶກສັນຍາເຊົ່ານຳເຈົ້າຂອງຊັບສິນ ພ້ອມທັງຮັບປະກັນໃນການສົ່ງຄືນທີ່ດິນ ຫຼື ສິ່ງປຸກສ້າງ ຕົ້ນໄມ້, ເຄື່ອງປູກໃຫ້ແກ່ ເຈົ້າຂອງຊັບສິນໃຫ້ໃກ້ຄຽງກັບສະພາບເດີມ;
6. ກໍລະນີສູນເສຍ ຕົ້ນໄມ້, ເຄື່ອງປູກ ເຈົ້າຂອງໂຄງການຕ້ອງທົດແທນຄ່າເສຍຫາຍ ຕາມຂໍ້ຕົກລົງສະບັບນີ້;
7. ຊັບສິນທີ່ໄດ້ຮັບຜົນກະທົບເຊິ່ງໄດ້ຮັບການແຈ້ງ ແລະ ຂຶ້ນບັນຊີຈາກຄະນະກຳມະການເກັບກຳຂໍ້ມູນ ໂດຍຖືກຮັບຮອງຈາກຂັ້ນເທິງຈຶ່ງໄດ້ຮັບການທົດແທນ ;
8. ສຳລັບ ເສັ້ນທາງເຂົ້າ-ອອກໂຄງການທີ່ສ້າງໃໝ່ ແມ່ນໃຫ້ປະຊາຊົນສາມາດຊົມໃຊ້ຕາມຈຸດປະສົງຕ່າງໆຂອງເຂົາເຈົ້າໄດ້, ສ່ວນດິນຂອງປະຊາຊົນທີ່ຢູ່ທາງດ້ານຫຼັງຂອງໂຄງການ ບໍລິສັດຕ້ອງຈັດຕອນດິນໃຫ້ມີເສັ້ນທາງເຂົ້າອອກໄດ້ຕາມປົກກະຕິ ໂດຍບໍ່ຜ່ານເຂດສຳປະທານຂອງໂຄງການ.

**ມາດຕາ 8 ເງື່ອນໄຂທີ່ຈະໄດ້ຮັບການທົດແທນ**

ເງື່ອນໄຂທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍ ມີດັ່ງນີ້ :

1. ຕ້ອງແມ່ນຊັບສິນ ທີ່ນອນຢູ່ໃນເຂດໂຄງການສຳປະທານ ກໍ່ສ້າງໂຮງງານຫຼອມເຫຼັກກ້າ ເຂດບ້ານ ຫາດໄຄ້ ແລະ ບ້ານທ່າບົກ ເມືອງທ່າພະບາດ ໃນເນື້ອທີ່ 300 ເຮັກຕາ ແລະ ຈາກການກໍ່ສ້າງເສັ້ນທາງເຂົ້າອອກຂອງໂຄງການ ຂະໜາດລວງກວ້າງ 25 ແມັດ x ລວງຍາວ 3.000 ແມັດ ;
2. ຊັບສິນຕ່າງໆ ທີ່ຖືກຜົນກະທົບ ຈາກໂຄງການສຳປະທານ ກໍ່ສ້າງໂຮງງານຫຼອມເຫຼັກກ້າ ເຂດບ້ານ ຫາດໄຄ້ ແລະ ບ້ານ ທ່າບົກ ເມືອງ ທ່າພະບາດ ທີ່ຈະໄດ້ຮັບການທົດແທນຕ້ອງມີເງື່ອນໄຂຢ່າງຄົບຖ້ວນຕາມທີ່ກຳນົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້;
3. ຕ້ອງແມ່ນທີ່ດິນ ທີ່ມີເອກະສານຢັ້ງຢືນສິດນຳໃຊ້ທີ່ດິນ, ສິດຊົມໃຊ້ທີ່ດິນ ແລະ ສິດໃຊ້ທີ່ດິນຕາມປະເພນີຢ່າງຖືກຕ້ອງຕາມກົດໝາຍ;
4. ສຳລັບຕົ້ນໄມ້ຕ້ອງແມ່ນຕົ້ນໄມ້ທີ່ມີການຢັ້ງຢືນຈາກເຈົ້າຂອງຜູ້ຄອບຄອງພ້ອມດ້ວຍພະຍານຈາກເຈົ້າຂອງທີ່ດິນອ້ອມຂ້າງ, ອົງການປົກຄອງບ້ານ ແລະ ຄະນະກຳມະການເກັບກຳຂໍ້ມູນ;
5. ສຳລັບສິ່ງປຸກສ້າງ ຕ້ອງແມ່ນສິ່ງປຸກສ້າງທີ່ສາມາດນຳໃຊ້ໄດ້;
6. ຕ້ອງແມ່ນຊັບສິນທີ່ບໍ່ມີຂໍ້ຂັດແຍ່ງກັບບຸກຄົນອື່ນ ຫຼື ອົງການຈັດຕັ້ງໃດໜຶ່ງ;
7. ຜູ້ທີ່ຈະໄດ້ຮັບການທົດແທນ ຕ້ອງໄດ້ໃຫ້ຂໍ້ມູນ ໃຫ້ການຮ່ວມມືກັບຄະນະຮັບຜິດຊອບການທົດແທນຄ່າເສຍຫາຍຂັ້ນແຂວງ ຂັ້ນເມືອງ ໃນການປະກອບເອກະສານໃຫ້ຄົບຖ້ວນ ແລະ ຖືກຕ້ອງ ໂດຍການຢັ້ງຢືນຈາກເຈົ້າຂອງຊັບສິນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ.

## ໝວດທີ 3
## ການຂຶ້ນບັນຊີ ແລະ ປະເພດຊັບສິນທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍ

**ມາດຕາ 9 ການຂຶ້ນບັນຊີຊັບສິນທີ່ໄດ້ຮັບຜົນກະທົບ**

ການຂຶ້ນບັນຊີຊັບສິນທີ່ໄດ້ຮັບຜົນກະທົບ ມີດັ່ງນີ້ :

1. ເຈົ້າໜ້າທີ່ກ່ຽວຂ້ອງ ຂຶ້ນບັນຊີ ສະເພາະແຕ່ຊັບສິນທີ່ໄດ້ຮັບຜົນກະທົບຕົວຈິງເທົ່ານັ້ນ;

2. ຜູ້ທີ່ໄດ້ຮັບສິດຂຶ້ນບັນຊີຊັບສິນ ຕ້ອງແຈ້ງຈຸດປະສົງຂໍຂຶ້ນບັນຊີ ນຳເຈົ້າໜ້າທີ່ກ່ຽວຂ້ອງ ແລະ ໃຫ້ຄວາມຮ່ວມມື ໃນການເກັບກຳຂໍ້ມູນ ຊັບສິນນຳພະນັກງານຂຶ້ນບັນຊີທີ່ລົງເກັບກຳຂໍ້ມູນຢູ່ບ້ານ ຕາມວັນ ແລະ ເວລາທີ່ນັດໝາຍ;
3. ຜູ້ທີ່ໄດ້ຮັບສິດຂຶ້ນບັນຊີຊັບສິນ ຕ້ອງປະກອບເອກະສານ ໃຫ້ຄົບຖ້ວນ ແລະ ຖືກຕ້ອງ ຕາມລະບຽບການ.

**ມາດຕາ 10 ປະເພດຊັບສິນທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍ**

ປະເພດຊັບສິນທີ່ຈະໄດ້ຮັບການທົດແທນຄ່າເສຍຫາຍ ມີດັ່ງນີ້ :

1. ປະເພດທີ່ດິນກະສິກຳ: ນາເຟືອງ, ນາເຮື້ອ, ດິນສວນ, ດິນປ່າເຫຼົ່າ ແລະ ດິນໜອງປາ;
2. ປະເພດຕົ້ນໄມ້: ຕົ້ນໄມ້ໃຫ້ໝາກ, ພືດຍືນຕົ້ນ ແລະ ຕົ້ນໄມ້ອຸດສາຫະກຳ;
3. ປະເພດສິ່ງປຸກສ້າງ: ຖຽງ, ຄອກສັດ, ຮົ້ວ, ນໍ້າສ້າງ

**ມາດຕາ 11 ການທົດແທນ, ການເບີກຈ່າຍຄ່າເສຍຫາຍ ແລະ ກຳນົດເວລາການເບີກຈ່າຍ**

1. ການທົດແທນ.

ການທົດແທນມີ 2 ຮູບແບບ ຄື:

- ການທົດແທນແບບຖາວອນ ແມ່ນທົດແທນຊັບສິນຂອງປະຊາຊົນ ທີ່ຖືກຜົນກະທົບ ເຊັ່ນ : ປະເພດທີ່ດິນກະສິກຳ, ສິ່ງປຸກສ້າງ, ເຄື່ອງປູກ ແລະ ອື່ນໆ;
- ການທົດແທນແບບຊົ່ວຄາວ ແມ່ນການທົດແທນ ໃນໄລຍະການກໍ່ສ້າງ ເຊິ່ງຢູ່ນອກພື້ນທີ່ຂອງໂຄງການດັ່ງກ່າວ ລວມມີທີ່ດິນກະສິກຳທີ່ຖືກສູນເສຍຊົ່ວຄາວ ເຊັ່ນ: ດິນນາ, ດິນສວນ, ດິນໜອງປາ, ແລະ ດິນປະເພດອື່ນໆ ທີ່ໄດ້ຮັບຜົນກະທົບ ເປັນຕົ້ນ: ການບຸກເບີກ, ການກໍ່ສ້າງອາຄານ ປະເພດຕ່າງໆ, ການສ້າງເສັ້ນທາງເພື່ອເຂົ້າຫາໂຄງການ ແລະ ອື່ນໆ ; ພາຍຫຼັງສຳເລັດການກໍ່ສ້າງໂຄງການ ເຈົ້າຂອງໂຄງການຈະຕ້ອງໄດ້ປັບປຸງທີ່ດິນໃຫ້ຢູ່ໃນສະພາບເດີມ ແລະ ສົ່ງຄືນເຈົ້າຂອງດິນ ເພື່ອສືບຕໍ່ນຳໃຊ້ໄດ້ ພ້ອມທັງຕ້ອງໄດ້ຄິດໄລ່ທົດແທນຄ່າເສຍຫາຍ ຕາມລະບຽບການ.

2. ການເບີກຈ່າຍຄ່າເສຍຫາຍ

ຄອບຄົວ, ບຸກຄົນ ຫຼື ນິຕິບຸກຄົນ ທີ່ຈະໄດ້ຮັບຄ່າທົດແທນ ຕ້ອງໄດ້ເປີດບັນຊີຢູ່ນຳທະນາຄານ ຕາມທີ່ເຈົ້າຂອງໂຄງການໄດ້ກຳນົດໃຫ້, ສຳລັບຄ່າສິ້ນເປືອງໃນການເປີດບັນຊີແມ່ນເຈົ້າຂອງໂຄງການເປັນຜູ້ຮັບຜິດຊອບການເບີກຈ່າຍເງິນທົດແທນ ເຈົ້າຂອງໂຄງການຈະຕ້ອງໄດ້ໂອນເງິນເປັນງວດດຽວໃຫ້ຄົບຕາມຈຳນວນເຂົ້າບັນຊີທະນາຄານຂອງຄອບຄົວບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບສິດການທົດແທນຈາກຜົນກະທົບ ; ໂດຍເຈົ້າຂອງໂຄງການຈະນຳເອົາປື້ມບັນຊີໄປໃຫ້ທະນາຄານຮັບຮອງການໂອນເງິນເຂົ້າບັນຊີ ແລ້ວເອົາກັບມາສົ່ງໃຫ້ເຈົ້າຂອງຊັບສິນ ພ້ອມລົງລາຍເຊັນວ່າໄດ້ຮັບເງິນເປັນທີ່ຮຽບຮ້ອຍແລ້ວ ;

- ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍຂັ້ນແຂວງ, ອົງການປົກຄອງຂັ້ນເມືອງ ຈະເປັນເຈົ້າການ, ເປັນໃຈກາງໃນການປະສານງານ ອຳນວຍຄວາມສະດວກໃນການເບີກຈ່າຍ ໂດຍຊ່ອງໜ້າເຈົ້າຂອງໂຄງການ ແລະ ປະຊາຊົນທີ່ໄດ້ຮັບຜົນກະທົບ.

3. ກຳນົດເວລາການເບີກຈ່າຍ

ເຈົ້າຂອງໂຄງການຕ້ອງຮັບຜິດຊອບເບີກຈ່າຍເງິນທົດແທນຄ່າເສຍຫາຍຕໍ່ຊັບສິນຂອງປະຊາຊົນທີ່ໄດ້ຮັບຜົນກະທົບໃຫ້ສຳເລັດໝົດພາຍໃນກຳນົດເວລາ ສາມເດືອນ ພາຍຫຼັງຂໍ້ຕົກລົງສະບັບນີ້ໄດ້ມີການຮັບຮອງ, ເຈົ້າແຂວງເຊັນຂໍ້ຕົກລົງ ແລະ ປະກາດນຳໃຊ້ໄດ້ ;

- ຖ້າແກ່ຍາວເວລາດົນເກີນນີ້ໄປ ຈະຕ້ອງໄດ້ຄິດໄລ່ອັດຕາເງິນເຟີ້ ຕາມສະພາບຕົວຈິງ.
- ຫຼັງຈາກ ທົດແທນຄ່າເສຍຫາຍສຳເລັດໝົດ ເຈົ້າຂອງໂຄງການຈຶ່ງສາມາດເລີ່ມລົງມືພັດທະນາໂຄງການໄດ້.

## ໝວດທີ 4
## ລາຄາຫົວໜ່ວຍຜົນກະທົບຕໍ່ທີ່ດິນກະສິກຳ ແລະ ຊັບສິນ

**ມາດຕາ 12 ລາຄາຫົວໜ່ວຍທົດແທນປະເພດທີ່ດິນກະສິກຳ ແລະ ຊັບສິນ.**

1. ລາຄາຫົວໜ່ວຍທົດແທນປະເພດທີ່ດິນກະສິກຳ

ເນື້ອທີ່ດິນທີ່ມີເອກະສານ ແລະ ບໍ່ມີເອກະສານນຳໃຊ້ທີ່ດິນ ແມ່ນກຳນົດລາຄາຫົວໜ່ວຍທົດແທນດຽວກັນ

| ລ/ດ | ປະເພດທີ່ດິນ | ຫົວໜ່ວຍ | ລາຄາຄິດໄລ່ (ກີບ) |
|---|---|---|---|
| 1 | ນາເຟືອງ | ມ$^2$ | 8.000 |
| 2 | ນາເຮື້ອ | ມ$^2$ | 6.000 |
| 3 | ດິນສວນ | ມ$^2$ | 5.500 |
| 4 | ດິນປ່າເຫຼົ່າ | ມ$^2$ | 2.000 |
| 5 | ດິນໜອງປາ | ມ$^3$ | 10.000 |

2. ລາຄາຫົວໜ່ວຍທົດແທນປະເພດຊັບສິນ

- ປະເພດສິ່ງປຸກສ້າງ ເຊັ່ນ: ຖຽງນາ, ຖຽງສວນ, ຮົ້ວ

ລາຄາຫົວໜ່ວຍທົດແທນປະເພດສິ່ງປຸກສ້າງປະເພດຖຽງນາ, ຖຽງສວນ ແມ່ນຕາມການປະເມີນແບບປະຖົມປະຖານ ຊຸກຍູ້ດ້ານແຮງງານ ເກັບມ້ຽນ ໂດຍເອກະພາບກັນກັບຜູ້ທີ່ໄດ້ຮັບຜົນກະທົບ .

- ລາຄາຫົວໜ່ວຍທົດແທນຄ່າແຮງງານປະເພດຮົ້ວ.
- ສ່ວນວັດສະດຸທີ່ມ້າງອອກຈາກຮົ້ວ,ຈາກຖຽງນາ, ຖຽງສວນ ເຊັ່ນ: ເສົາຊີມັງ, ເສົາໄມ້, ໜາມໜາກຈັບ ແລະ ອື່ນໆທີ່ໄດ້ຮັບການທົດແທນແລ້ວ ແມ່ນມອບໃຫ້ເຈົ້າຂອງເດີມ.

| ລ/ດ | ລາຍການ | ຫົວໜ່ວຍ | ລາຄາຄິດໄລ່ (ກີບ) | ໝາຍເຫດ |
|---|---|---|---|---|
| 1 | ຮົ້ວເສົາຊີມັງ + ໜາມໜາກຈັບ 4 ຮາວ | ແມັດຍາວ | 47.000 | |
| 2 | ຮົ້ວເສົາໄມ້ + ໜາມໜາກຈັບ 4 ຮາວ | ແມັດຍາວ | 22.000 | |
| 3 | ຮົ້ວເສົາໄມ້ + ຮາວໄມ້ໄຜ່ 4 ຮາວ | ແມັດຍາວ | 21.000 | |

**ມາດຕາ 13 ລາຄາຫົວໜ່ວຍທົດແທນປະເພດຕົ້ນໄມ້ໃຫ້ໝາກ**

ລາຄາຫົວໜ່ວຍທົດແທນປະເພດຕົ້ນໄມ້ໃຫ້ໝາກ ແມ່ນຕົ້ນໄມ້ໃຫ້ໝາກທີ່ຈະໄດ້ຮັບການທົດແທນເປັນ ຕົ້ນໄມ້ທີ່ໄດ້ປູກ ຫຼື ຕົ້ນໄມ້ທຳມະຊາດທີ່ມີການປົວລະບັດ ຮັກສາຈາກຜູ້ເປັນເຈົ້າຂອງໄດ້ກຳນົດລາຄາ ດັ່ງນີ້:

| ລ/ດ | ລາຍການ | ອາຍຸ | | | | | |
|---|---|---|---|---|---|---|---|
| | | 1 ປີ | 2 ປີ | 3 ປີ | 4 ປີ | 5 ປີ | ≥6 ປີ |
| 1 | ຕົ້ນໝາກມ່ວງ | 50.000 | 65.000 | 80.000 | 95.000 | 110.000 | 260.000 |
| 2 | ຕົ້ນໝາກຂາມ | 50.000 | 65.000 | 80.000 | 95.000 | 110.000 | 260.000 |
| 3 | ຕົ້ນໝາກສີດາ | 25.000 | 35.000 | 45.000 | 55.000 | 100.000 | 171.000 |
| 4 | ຕົ້ນໝາກພ້າວ | 30.000 | 45.000 | 60.000 | 75.000 | 90.000 | 350.000 |
| 5 | ຕົ້ນໝາກນາວ | 20.000 | 35.000 | 70.000 | 85.000 | 100.000 | 260.000 |
| 6 | ຕົ້ນໝາກລຳໄຍ | 30.000 | 45.000 | 60.000 | 75.000 | 90.000 | 270.000 |

| | | | | | | | |
|---|---|---|---|---|---|---|---|
| 7 | ຕົ້ນໝາກຕ້ອງ | 30.000 | 45.000 | 60.000 | 75.000 | 90.000 | 270.000 |
| 8 | ຕົ້ນໝາກກ້ຽງໃຫຍ່ | 30.000 | 45.000 | 60.000 | 75.000 | 90.000 | 300.000 |
| 9 | ຕົ້ນໝາກມີ້ | 30.000 | 45.000 | 60.000 | 75.000 | 90.000 | 270.000 |
| 10 | ຕົ້ນໝາກຄໍ້ | 20.000 | 35.000 | 50.000 | 65.000 | 80.000 | 240.000 |
| 11 | ຕົ້ນໝາກກະທັບໃຫ່ຍ | 30.000 | 45.000 | 60.000 | 75.000 | 90.000 | 270.000 |

**ມາດຕາ 14 ລາຄາຫົວໜ່ວຍທົດແທນຕົ້ນໄມ້ອຸດສາຫະກຳ ແລະ ໄມ້ປ່ອງ**

ລາຄາຫົວໜ່ວຍທົດແທນຕົ້ນໄມ້ອຸດສາຫະກຳ ແລະ ໄມ້ປ່ອງ ມີດັ່ງນີ້:

**1. ໄມ້ອຸດສາຫະກຳ**

| ລ/ດ | ລາຍການ | 1 ປີ | 2 ປີ | 3 ປີ | 4 ປີ | 5 ປີ | 6 ປີ | ≥7 ປີ |
|---|---|---|---|---|---|---|---|---|
| 1 | ຕົ້ນຢາງພາລາ | 85.000 | 100.000 | 130.000 | 150.000 | 200.000 | 250.000 | 350.000 |
| 2 | ຕົ້ນໄມ້ສັກ | 25.000 | 50.000 | 80.000 | 100.000 | 150.000 | 200.000 | 250.000 |
| 3 | ຕົ້ນໄມ້ຂະຍຸງ | 35.000 | 50.000 | 80.000 | 100.000 | 150.000 | 200.000 | 300.000 |
| 4 | ຕົ້ນໄມ້ຄຳພີ້ | 35.000 | 50.000 | 80.000 | 100.000 | 150.000 | 200.000 | 300.000 |
| 5 | ຕົ້ນໄມ້ດູ່ ແລະ ໄມ້ດູ່ລາຍ | 35.000 | 50.000 | 80.000 | 100.000 | 150.000 | 200.000 | 300.000 |
| 6 | ຕົ້ນໄມ້ແຄນ | 25.000 | 30.000 | 60.000 | 100.000 | 150.000 | 200.000 | 300.000 |
| 7 | ຕົ້ນໄມ້ແຕ້ | 25.000 | 30.000 | 60.000 | 100.000 | 150.000 | 200.000 | 300.000 |
| 8 | ຕົ້ນໄມ້ຍາງ | 15.000 | 20.000 | 40.000 | 80.000 | 150.000 | 200.000 | 250.000 |
| 9 | ຕົ້ນໄມ້ມັນປາ | 15.000 | 20.000 | 40.000 | 80.000 | 150.000 | 200.000 | 250.000 |
| 10 | ຕົ້ນໄມ້ເກດສະໜາ | 25.000 | 45.000 | 60.000 | 70.000 | 100.000 | 150.000 | 150.000 |
| 11 | ຕົ້ນໄມ້ວິກ | 10.000 | 12.000 | 13.000 | 20.000 | 30.000 | 35.000 | 40.000 |
| 12 | ຕົ້ນຢາງບົງ | 13.000 | 23.000 | 33.000 | 43.000 | 70.000 | 90.000 | 100.000 |

**2. ໄມ້ປ່ອງ**

| ປະເພດ | ຫົວໜ່ວຍ | ລາຄາຄິດໄລ່ (ກີບ) |
|---|---|---|
| ໄມ້ໄຜ່ບ້ານ | ສຸມ | 300.000 |
| ໄມ້ຊ່າງໄພ | ສຸມ | 250.000 |

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 15 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ມີພຶດຕິກຳດັ່ງນີ້:

1. ປົກປິດ, ຊຸກເຊື່ອງ, ບໍ່ຈິງໃຈແຈ້ງຂໍ້ມູນ ແລະ ປອມແປງເອກະສານ ເຊິ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ຂອງບຸກຄົນອື່ນ;
2. ໃຊ້ຄວາມຮຸນແຮງ, ນາບຂູ່, ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານທີ່ກ່ຽວຂ້ອງໃນເວລາລົງຈັດຕັ້ງປະຕິບັດວຽກງານ;
3. ປຸກລະດົມໂຄສະນາໃສ່ຮ້າຍປ້າຍສີໃນທຸກຮູບແບບ ເປັນຕົ້ນ: ສື່ອອນລາຍຕ່າງໆ ໃນການປະຕິບັດຂໍ້ຕົກລົງສະບັບນີ້

4. ການບຸກເບີກ, ການພັດທະນາກໍ່ສ້າງໃນເນື້ອທີ່ເຂດໂຄງການ ແລະ ມີພຶດຕິກຳອື່ນໆ ທີ່ເປັນການລະເມີດຕໍ່ກົດໝາຍ ແລະ ລະບຽບການ.

**ມາດຕາ 16 ຂໍ້ຫ້າມສຳລັບພະນັກງານ**

ຫ້າມພະນັກງານ ມີພຶດຕິກຳດັ່ງນີ້:

1. ປົກປິດ, ຊຸກເຊື່ອງ, ບໍ່ຈິງໃຈແຈ້ງຂໍ້ມູນ ແລະ ປອມແປງເອກະສານ ເຊິ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ຂອງບຸກຄົນອື່ນ;
2. ສວຍໃຊ້ໜ້າທີ່ຕຳແໜ່ງ, ເຂົ້າຂ້າງ-ອອກຂາ ແລະ ຮັບສິນບົນ ເພື່ອຜົນປະໂຫຍດສ່ວນຕົວ;
3. ໃຊ້ສິດໜ້າທີ່ເກີນຂອບເຂດ ຫຼື ບໍ່ມີຄວາມຮັບຜິດຊອບຕໍ່ໜ້າທີ່ ເຊິ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ປະຊາຊົນ;
4. ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ຫຼື ມີພຶດຕິກຳອື່ນໆ ທີ່ບໍ່ຖືກຕ້ອງຕາມກົດໝາຍ.

## ໝວດທີ 6
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 17 ການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງ ມີ 3 ຮູບແບບ ດັ່ງນີ້:

1. ຮູບແບບການປະນີປະນອມ;
2. ຮູບແບບການແກ້ໄຂທາງດ້ານບໍລິຫານ;
3. ຮູບແບບການແກ້ໄຂຕາມຂະບວນການຍຸຕິທຳ.

**ມາດຕາ 18 ຮູບແບບການປະນີປະນອມ**

ໃນກໍລະນີມີຂໍ້ຂັດແຍ່ງທີ່ເກີດຂຶ້ນຄູ່ກໍລະນີຕ້ອງດຳເນີນການແກ້ໄຂຂໍ້ຂັດແຍ່ງນຳກັນໂດຍສັນຕິວິທີ, ປະນີປະນອມ ຫຼື ໂດຍຜ່ານຄົນກາງ ເພື່ອໃຫ້ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດທີ່ສົມເຫດສົມຜົນ ແລະ ເປັນທຳ.

**ມາດຕາ 19 ຮູບແບບການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີ ມີຂໍ້ຂັດແຍ່ງ ກ່ຽວກັບການທົດແທນຄ່າເສຍຫາຍ ຊຶ່ງບໍ່ຮ້າຍແຮງ ໃຫ້ຄູ່ກໍລະນີ ເປັນເຈົ້າການຄົ້ນຄວ້າ ແລະ ແກ້ໄຂກັນກ່ອນ ຫຼື ສະເໜີຕໍ່ອົງການຄຸ້ມຄອງແກ້ໄຂ.

**ມາດຕາ 20 ຮູບແບບການແກ້ໄຂຕາມຂະບວນການຍຸຕິທຳ**

ໃນກໍລະນີ ເກີດຂໍ້ຂັດແຍ່ງທີ່ບໍ່ສາມາດແກ້ໄຂໄດ້ ຝ່າຍໃດຝ່າຍໜຶ່ງມີສິດສະເໜີເຂົ້າສູ່ຂະບວນການຍຸຕິທຳ.

## ໝວດທີ 7
## ການຄຸ້ມຄອງ

**ມາດຕາ 21 ອົງການຄຸ້ມຄອງວຽກງານທົດແທນຄ່າເສຍຫາຍ**

ອົງການຄຸ້ມຄອງວຽກງານທົດແທນຄ່າເສຍຫາຍ ແມ່ນຜູ້ຊີ້ນຳການທົດແທນຄ່າເສຍຫາຍຜົນກະທົບຈາກໂຄງການຢ່າງລວມສູນເປັນເອກະພາບ ໂດຍແມ່ນຄະນະຮັບຜິດຊອບຊີ້ນຳຂັ້ນແຂວງ ມອບໃຫ້ຄະນະກຳມະການເກັບກຳຂໍ້ມູນຂັ້ນແຂວງ ປະສານສົມທົບກັບອົງການປົກຄອງຂັ້ນເມືອງ ແລະ ອົງການປົກຄອງຂັ້ນບ້ານ ເປັນເຈົ້າການຄຸ້ມຄອງ ເພື່ອຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ໄດ້ຮັບຜົນສຳເລັດ ເຊິ່ງປະກອບດ້ວຍພາກສ່ວນ ດັ່ງນີ້:

1. ຄະນະຮັບຜິດຊອບ ການທົດແທນຄ່າເສຍຫາຍຂັ້ນແຂວງ ປະກອບມີ:
   - ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ;
   - ພະແນກ ກະສິກຳ ແລະ ປ່າໄມ້ແຂວງ ;
   - ພະແນກ ອຸດສາຫະກຳ ແລະ ການຄ້າແຂວງ ;
   - ພະແນກ ໂຍທາທິການ ແລະ ຂົນສົ່ງແຂວງ ;
   - ພະແນກ ຍຸຕິທຳແຂວງ.
2. ອົງການປົກຄອງຂັ້ນເມືອງ ປະກອບມີ:
   - ຮອງເຈົ້າເມືອງທ່າພະບາດ ຜູ້ຊີ້ນຳວຽກງານເສດຖະກິດ ;
   - ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ;
   - ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ ;
   - ຫ້ອງການ ອຸດສາຫະກຳ ແລະ ການຄ້າເມືອງ ;
   - ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ ;
   - ຫ້ອງການ ຍຸຕິທຳເມືອງ.
3. ອົງການປົກຄອງຂັ້ນບ້ານ ປະກອບມີ:
   - ນາຍບ້ານ ບ້ານຫາດໄຄ້ ;
   - ນາຍບ້ານ ບ້ານທ່າບົກ ;
   - ຄະນະໄກ່ເກ່ຍບ້ານຫາດໄຄ້ ;
   - ຄະນະໄກ່ເກ່ຍບ້ານທ່າບົກ.

**ມາດຕາ 22 ສິດ ແລະ ໜ້າທີ່ຂອງຄະນະຮັບຜິດຊອບ ການທົດແທນຄ່າເສຍຫາຍຂັ້ນແຂວງ**

ສິດແລະ ໜ້າທີ່ຂອງຄະນະຮັບຜິດຊອບ ການທົດແທນຄ່າເສຍຫາຍຂັ້ນແຂວງ ມີດັ່ງນີ້ :

1. ຊີ້ນຳ, ຄຸ້ມຄອງການວາງແຜນ ແລະ ການຈັດຕັ້ງປະຕິບັດໂຄງການສຳປະທານ ກໍ່ສ້າງໂຮງງານຫຼອມເຫຼັກກ້າ ເຂດບ້ານ ຫາດໄຄ້ ແລະ ບ້ານ ທ່າບົກ ເມືອງ ທ່າພະບາດ ສະເພາະໜ່ວຍງານຢູ່ພາຍໃຕ້ການຊີ້ນຳຂອງຕົນ;
2. ແຕ່ງຕັ້ງໜ່ວຍງານຄຸ້ມຄອງການທົດແທນຄ່າເສຍຫາຍ ແລະ ໜ່ວຍປະຕິບັດງານການທົດແທນຄ່າເສຍຫາຍ;
3. ຊີ້ນຳ ແລະ ພິຈາລະນາແກ້ໄຂ ບັນດາຂໍ້ສະເໜີຕ່າງໆ ທີ່ພົວພັນກັບ ໂຄງການສຳປະທານ ກໍ່ສ້າງໂຮງງານຫຼອມເຫຼັກກ້າ ເຂດບ້ານ ຫາດໄຄ້ ແລະ ບ້ານ ທ່າບົກ ເມືອງ ທ່າພະບາດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນໃຫ້ທັນເວລາ;
4. ເປັນເຈົ້າການ, ເປັນໃຈກາງໃນການຕິດຕາມກວດກາ ການຊຳລະເງິນທົດແທນຄ່າເສຍຫາຍ ໃຫ້ຖືກຕ້ອງຕາມລະບຽບການ ໂດຍປະສານສົມທົບກັບເຈົ້າຂອງໂຄງການ, ອົງການປົກຄອງຂັ້ນເມືອງ ແລະ ອົງການປົກຄອງບ້ານ;
5. ລາຍງານການຈັດຕັ້ງປະຕິບັດວຽກງານ ຂອງຄະນະຮັບຜິດຊອບ ແລະ ໜ່ວຍງານທີ່ໃຕ້ການຊີ້ນຳຂອງຕົນໃຫ້ຂັ້ນເທິງທີ່ກ່ຽວຂ້ອງຮັບຊາບ;
6. ອອກຂໍ້ຕົກລົງ ຫຼື ແຈ້ງການ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດການທົດແທນຄ່າເສຍຫາຍທີ່ ໄດ້ຮັບຜົນກະທົບ ຈາກໂຄງການ ໃນເນື້ອທີ່ 300 ເຮັກຕາ;
7. ຊີ້ນຳ ແລະ ສະໜອງຂໍ້ມູນຂ່າວສານ ໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບ ແລະ ຜູ້ທີ່ມີສ່ວນຮ່ວມອື່ນໆ ກ່ຽວກັບໂຄງການສຳປະທານ ກໍ່ສ້າງໂຮງງານຫຼອມເຫຼັກກ້າ ເຂດບ້ານ ຫາດໄຄ້ ແລະ ບ້ານ ທ່າບົກ ເມືອງ ທ່າພະບາດ ໃນເນື້ອທີ່ 300 ເຮັກຕາ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຈາກຄະນະຊີ້ນຳຂັ້ນແຂວງ.

**ມາດຕາ 23 ສິດ ແລະ ໜ້າທີ່ຂອງອົງການປົກຄອງຂັ້ນເມືອງ**

ສິດ ແລະ ໜ້າທີ່ຂອງໜ່ວຍງານຄຸ້ມຄອງການທົດແທນຄ່າເສຍຫາຍ ມີດັ່ງນີ້ :

1. ເປັນເສນາທິການໃຫ້ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍຂັ້ນແຂວງໃນການປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ຂອງລັດ ແລະ ເຈົ້າຂອງໂຄງການ ເພື່ອປະຕິບັດແຜນການທົດແທນຄ່າເສຍຫາຍຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ;
2. ທົບທວນການສະເໜີຂໍ້ສະດວກ, ຂໍ້ຫຍຸ້ງຍາກຂອງ ຜູ້ທີ່ໄດ້ຮັບຜົນກະທົບ ແລະ ປະກອບຄຳເຫັນຕໍ່ເອກະສານຕ່າງໆ ທີ່ກ່ຽວຂ້ອງກັບການທົດແທນຄ່າເສຍຫາຍຂອງປະຊາຊົນ;
3. ປະສານສົມທົບຢ່າງໃກ້ຊິດ ກັບ ໜ່ວຍປະຕິບັດງານການທົດແທນຄ່າເສຍຫາຍ ໃນການຈັດຕັ້ງປະຕິບັດແຜນການທົດແທນຄ່າ ເສຍຫາຍຂອງປະຊາຊົນ;
4. ພິຈາລະນາ ແລະ ແກ້ໄຂຂໍ້ສະເໜີທີ່ກ່ຽວຂ້ອງ ກັບການທົດແທນຄ່າເສຍຫາຍຂອງປະຊາຊົນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນໃຫ້ທັນເວລາ;
5. ລາຍງານການຈັດຕັ້ງປະຕິບັດວຽກງານຂອງໜ່ວຍງານຕົນແຕ່ລະໄລຍະ ຕໍ່ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍ ຂັ້ນແຂວງ;
6. ເຜີຍແຜ່, ສະໜອງຂໍ້ມູນຂ່າວສານ ໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບ ແລະ ຄວາມຄືບໜ້າກ່ຽວກັບການ ຈັດຕັ້ງປະຕິບັດແຜນການທົດແທນຄ່າເສຍຫາຍຂອງປະຊາຊົນ ຕະຫຼອດໄລຍະເວລາການປະຕິບັດໂຄງການ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມການມອບໝາຍ.

**ມາດຕາ 24 ສິດ ແລະ ໜ້າທີ່ຂອງອົງການປົກຄອງຂັ້ນບ້ານ.**

ສິດ ແລະ ໜ້າທີ່ຂອງອົງການປົກຄອງຂັ້ນບ້ານ ມີດັ່ງນີ້:

1. ສຶກສາອົບຮົມ ແລະ ເຜີຍແຜ່ຂໍ້ມູນຂ່າວສານໃຫ້ປະຊາຊົນຮັບຮູ້, ເຂົ້າໃຈກ່ຽວກັບແຜນພັດທະນາໂຄງການໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ໃຫ້ຄວາມຮ່ວມມື ແລະ ເຂົ້າຮ່ວມກິດຈະກຳຂອງໂຄງການ ໃນຂອບເຂດທີ່ຕົນຮັບຜິດຊອບ;
3. ສັງລວມບັນຫາທີ່ເກີດຂຶ້ນກ່ຽວກັບຊັບສິນທັງໝົດທີ່ໄດ້ຮັບຜົນກະທົບຈາກໂຄງການ ໃຫ້ໜ່ວຍປະຕິບັດງານການທົດແທນຄ່າເສຍຫາຍໄດ້ຮັບຊາບ;
4. ຮຽກເຊີນປະຊຸມຕໍ່ຜູ້ທີ່ໄດ້ຮັບກະທົບຈາກໂຄງການໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ເປັນເຈົ້າການສຶກສາອົບຮົມ ແລະ ແກ້ໄຂຂໍ້ຂັດແຍ່ງ ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ ໃນຂອບເຂດ ຄວາມຮັບຜິດຊອບຂອງຕົນ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມການມອບໝາຍ.

## ໝວດທີ 8
## ການກວດກາ

**ມາດຕາ 25 ອົງການກວດກາ.**

ອົງການກວດການະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນຄ່າເສຍຫາຍຕໍ່ຊັບສິນທີ່ໄດ້ຮັບຜົນກະທົບຈາກໂຄງການສຳປະທານ ກໍ່ສ້າງໂຮງງານຫຼອມເຫຼັກກ້າ ເຂດບ້ານຫາດໄຄ້ ແລະ ບ້ານທ່າບົກ ເມືອງທ່າພະບາດ ມີດັ່ງນີ້:

1. ອົງການກວດກາພາຍໃນ ປະກອບມີ:
    - ຄະນະຮັບຜິດຊອບ ການທົດແທນຄ່າເສຍຫາຍຂັ້ນແຂວງ;
    - ອົງການປົກຄອງຂັ້ນເມືອງ;
    - ອົງການປົກຄອງຂັ້ນບ້ານ.
2. ອົງການກວດກາພາຍນອກ ປະກອບມີ:

- ສະພາປະຊາຊົນແຂວງ ;
- ອົງການກວດກາລັດ ;
- ແນວລາວສ້າງຊາດ ;
- ສະຫະພັນນັກຮົບເກົ່າ ;
- ອົງການຈັດຕັ້ງມະຫາຊົນ ;
- ປະຊາຊົນ ;
- ສື່ມວນຊົນ.

**ມາດຕາ 26 ເນື້ອໃນການກວດກາ**

ເນື້ອໃນການກວດກາມີດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດວຽກງານການທົດແທນຄ່າເສຍຫາຍທີ່ໄດ້ຮັບຜົນກະທົບ ຈາກໂຄງການສໍາປະທານ ກໍ່ສ້າງໂຮງງານຫຼອມເຫຼັກກ້າ ເຂດບ້ານ ຫາດໄຄ້ ແລະ ບ້ານ ທ່າບົກ ເມືອງ ທ່າພະບາດ ໃຫ້ຖືກຕ້ອງຕາມຂໍ້ຕົກລົງສະບັບນີ້;
2. ກວດກາຄືນຕາມຄໍາຮ້ອງທຸກຂອງປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບ ໃຫ້ໄດ້ຮັບການແກ້ໄຂ ໃຫ້ຖືກຕ້ອງ, ໂປ່ງໃສ ແລະ ເປັນທໍາ.

**ມາດຕາ 27 ຮູບການກວດກາ**

ຮູບການກວດກາມີດັ່ງນີ້ :

1. ການກວດກາປົກກະຕິ ແມ່ນການກວດກາທີ່ດໍາເນີນໄປຕາມແຜນການ, ແຜນງານ ແລະ ໜ້າວຽກ ທີ່ໄດ້ກໍານົດໄວ້ ໃນເວລາອັນແນ່ນອນ;
2. ການກວດກາໂດຍມີການແຈ້ງລ່ວງໜ້າ ແມ່ນການກວດການອກແຜນເມື່ອເຫັນວ່າມີຄວາມຈໍາເປັນ ຫຼື ມີຄໍາສະເໜີຂອງປະຊາຊົນໂດຍມີການແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;
3. ການກວດກາແບບກະທັນຫັນແມ່ນການກວດການອກແຜນທີ່ມີຄວາມຈໍາເປັນຮີບດ່ວນໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

## ໝວດທີ 9
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 28 ນະໂຍບາຍຕໍ່ຜູ້ມີຜົນງານ .**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ແມ່ນຈະໄດ້ຮັບການຍ້ອງຍໍຊົມເຊີຍຕາມລະບຽບການຂອງລັດ.

**ມາດຕາ 29 ມາດຕະການຕໍ່ຜູ້ລະເມີດ.**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ຈະໄດ້ຮັບການສຶກສາອົບຮົມ, ກ່າວເຕືອນ, ປະຕິບັດວິໄນ, ປັບໃໝ, ໃຊ້ແທນທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກົດໝາຍທີ່ໄດ້ກໍານົດໄວ້.

**ມາດຕາ 30 ມາດຕະການສຶກສາອົບຮົມ.**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ໂດຍບໍ່ໄດ້ເຈດຕະນາ ຮູ້ເທົ່າບໍ່ເຖິງການ ທີ່ມີລັກສະນະເບົາບາງ, ເປັນການກະທຳຜິດຄັ້ງທຳອິດ, ເຊິ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ບໍ່ກໍ່ຄວາມເສຍຫາຍທີ່ມີມູນຄ່າຫຼວງຫຼາຍ ຈະໄດ້ຖືກກ່າວຕັກເຕືອນ ແລະ ສຶກສາອົບຮົມ.

**ມາດຕາ 31 ມາດຕະການທາງວິໄນ.**

ພະນັກງານ ແລະ ເຈົ້າໜ້າທີ່ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ທີ່ມີລັກສະນະເບົາບາງ ເຊິ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກກ່າວເຕືອນຄວາມຜິດ, ກໍລະນີບໍ່ຈິງໃຈລາຍງານ, ຫຼົບຫຼີກຈາກຄວາມຜິດຂອງຕົນຈະຖືກໂຈະການເລື່ອນຊັ້ນ ຂັ້ນເງິນເດືອນ, ການຍ້ອງຍໍ ຫຼື ປົດຕຳແໜ່ງ ຍົກຍ້າຍໄປຮັບຕຳແໜ່ງອື່ນທີ່ຕໍ່າກວ່າເກົ່າ ຫຼື ໃຫ້ອອກຈາກລັດຖະກອນ ແລະ ຜູ້ທີ່ຖືກປະຕິບັດວິໄນ ຕ້ອງສົ່ງຊັບສິນຂອງຕົນ ທີ່ໄດ້ມາໂດຍບໍ່ຖືກຕ້ອງຄືນໃຫ້ການຈັດຕັ້ງຢ່າງຄົບຖ້ວນ.

**ມາດຕາ 32 ມາດຕະການທາງແພ່ງ.**

ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ລວມເຖິງເຈົ້າໜ້າທີ່ຂອງລັດທີ່ໄດ້ລະເມີດຕໍ່ຂໍ້ຕົກລົງສະບັບນີ້ເຊິ່ງໄດ້ກໍ່ຄວາມເສຍຫາຍໃຫ້ແກ່ສິດ ແລະ ຜົນປະໂຫຍດຕໍ່ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ເນື່ອງຈາກການກະທຳທີ່ບໍ່ຖືກຕ້ອງ ແມ່ນຈະຕ້ອງໄດ້ໃຊ້ແທນຄ່າເສຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນຢ່າງຄົບຖ້ວນ.

**ມາດຕາ 33 ມາດຕະການທາງອາຍາ.**

ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ລວມເຖິງເຈົ້າໜ້າທີ່ຂອງລັດທີ່ໄດ້ລະເມີດຕໍ່ຂໍ້ຕົກລົງສະບັບນີ້ເຊິ່ງໄດ້ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ໃຫ້ແກ່ສິດ ແລະ ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ປະຊາຊົນ ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການຈະຖືກດຳເນີນຄະດີອາຍາຕາມປະມວນກົດໝາຍອາຍາ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

**ມາດຕາ 34 ການຈັດຕັ້ງປະຕິບັດ.**

ມອບໃຫ້ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍຂັ້ນແຂວງ, ອົງການປົກຄອງຂັ້ນເມືອງ, ອົງການປົກຄອງຂັ້ນບ້ານ, ປະຊາຊົນ, ເຈົ້າຂອງໂຄງການ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 35 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

**ເຈົ້າແຂວງ**

ແຂວງບໍລິຄຳໄຊ ເຈົ້າແຂວງ

ປອ. ກອງແກ້ວ ໄຊສົງຄາມ